Australian Government
Department of Human Services

# ທ່ານຈະເດີນທາງອອກໄປນອກ ອົດສະຕາລີບໍ່?

## ການຈ່າຍເງິນບຳນານໃຫ້ໃນຂະນະຢູ່ນອກ ອົດສະຕາລີ

ເພື່ອໃຫ້ໄດ້ຮັບເງິນບຳນານ ຫຼື ບັດຫຼຸດລາຄາໃນຂະນະທີ່ ຢູ່ນອກ**ອົດສະຕາລີ**ທ່ານຕ້ອງສືບຕໍ່ການໄດ້ຕາມເງື່ອນໄຂໃນການໄດ້ຮັບການເບີກຈ່າຍແຕ່ລະຄັ້ງແລະ ບັດຫຼຸດລາຄາ.

ຂຶ້ນຢູ່ກັບການຈ່າຍເງິນບຳນານ ຫຼື ບັດຫຼຸດລາຄາຂອງ ທ່ານ ມີກົດລະບຽບຕ່າງກັນກ່ຽວກັບການເດີນທາງອອກໄປນອກອົດສະຕາລີອາດກະທົບຕໍ່ທ່ານ. ອີງຕາມກົດລະບຽບເຫຼົ່ານີ້, ໃນເວລາທີ່ ທ່ານອອກນອກອົດສະຕາລີ ການຈ່າຍເງິນບຳນານ ຫຼື ບັດຫຼຸດລາຄາຂອງທ່ານອາດຈະມີການປ່ຽນແປງ ຫຼື ອາດຖືກຢຸດໂຈະກໍໄດ້ເປັນໄດ້. ເພື່ອຊອກຫາຂໍ້ມູນອັບເດດກ່ຽວກັບ ການຈ່າຍເງິນບຳນານ ຫຼື ບັດຫຼຸດລາຄາໃນຂະນະທີ່ທ່ານຢູ່ ຕ່າງປະເທດ ກະລຸນາເຂົ້າເບິ່ງ**humanservices.gov.au/paymentsoverseas**

ໃຫ້ກວດເບິ່ງເວັບໄຊຕ໌ກ່ອນທີ່ທ່ານຈະເດີນທາງ ຫຼື ໂທ ຫາໝາຍເລກ
**131 202** ເພື່ອເວົ້າລົມກັບຜູ້ໃດໜຶ່ງເປັນ ພາສາຂອງທ່ານກ່ຽວກັບສະຖານະສະເພາະຂອງທ່ານ.

## ບອກພວກເຮົາກ່ຽວກັບການປ່ຽນແປງຕໍ່ສະຖານະ ຂອງທ່ານ

ມັນສຳຄັນທີ່ທ່ານຕ້ອງແຈ້ງໃຫ້ພວກເຮົາຊາບເຖິງ ການປ່ຽນແປງຕໍ່ສະຖານະຂອງທ່ານເຊິ່ງທຳມະດາ ແລ້ວອາດຈະກະທົບຕໍ່ການຈ່າຍເງິນບຳນານ ຫຼື ບັດຫຼຸດ ລາຄາຂອງທ່ານໃນຂະນະທີ່ທ່ານຢູ່ຕ່າງປະເທດ ຊຶ່ງທ່ານກໍຕ້ອງເຮັດຄືກັນຖ້າທ່ານຍັງຢູ່ໃນອອສເຕຣເລັຍ. ຕົວຢ່າງ ເຊັ່ນ
ທ່ານຕ້ອງແຈ້ງພວກເຮົາຖ້າມີການປ່ຽນແປງຕໍ່ສະຖານະພາບຄວາມສຳພັນຂອງທ່ານ.

## ວິທີແຈ້ງພວກເຮົາກ່ຽວກັບການເດີນທາງຂອງທ່ານ

ວິທີແຜນການເດີນທາງຂອງທ່ານງ່າຍທີ່ສຸດໃຫ້ພວກເຮົາແມ່ນນຳໃຊ້ໃຊ້ບັນຊີ Centrelink ອອນໄລນ໌ຂອງທ່ານໂດຍຜ່ານ myGov. ທ່ານສາມາດເພີ່ມ ເບິ່ງ, ດັດແກ້ ແລະ ຕັດອອກ ລາຍລະອຽດຕ່າງໆຂອງການເດີນທາງໄປຕ່າງປະເທດຂອງທ່ານທາງອອນໄລນ໌ໄດ້ທຸກເວລາ.

ຈົ່ງລົງທະບຽນເອົາບັນຊີ Centrelink ອອນໄລນ໌ໂດຍ ຜ່ານ
myGovກ່ອນທ່ານຈະເດີນທາງອອກຈາກອົດສະຕາລີເພື່ອວ່າທ່ານຈະສາມາດແຈ້ງໃຫ້ພວກເຮົາຊາບເລື້ອງແຜນການເດີນທາງຂອງທ່ານໄດ້ງ່າຍ ແລະ ເຂົ້າ ຫາເບິ່ງຈົດໝາຍ ແລະ ບໍລິການອື່ນໆທາງອອນໄລນ໌ໃນຂະນະທ່ານທ່ານຢູ່ໄກ.

ນອກຈາກນີ້
ກະຊວງກວດຄົນເຂົ້າເມືອງຂອງອົດສະຕາລີຍັງຈະໄດ້ແນະນຳພວກເຮົາເວລາທ່ານອອກນອກປະເທດ.

ຖ້າທ່ານຍັງບໍ່ທັນມີບັນຊີ myGov ຈົ່ງສ້າງບັນຊີ myGov ທີ່ **my.gov.au ແລະ ເຊື່ອມ** Centrelinkເຂົ້າບັນ ຊີ myGov ດ້ວຍການເລືອກເອົາ'Services' ແລ້ວເລືອກ ເອົາປຸ່ມ link ທີ່ຢູ່ໃກ້ Centrelink. ທ່ານອາດຈະຕ້ອງໄດ້ ຕອບບາງຄຳຖາມເພື່ອພວກເຮົາຈະເຊື່ອມຕໍ່ບັນທຶກອັນ ຖືກຕ້ອງເຂົ້າຫາບັນຊີ myGov ຂອງທ່ານ.

ຖ້າທ່ານເລືອກທີ່ຈະລົງທະບຽນນຳເບີໂທຣະສັບຂອງທ່ານ ໃສ່ myGov ຈົ່ງໃຫ້ແນ່ໃຈວ່າທ່ານສາມາດຮັບຂໍ້ຄວາມ ໄດ້ຈາກນຳເບີນີ້ໃນຂະນະທີ່ທ່ານຢູ່ຕ່າງປະເທດ.

## ການເຂົ້າເຖິງ Medicare ໃນຂະນະທີ່ຢູ່ນອກ ອົດສະຕາລີ

ທ່ານບໍ່ສາມາດເຂົ້າຫາບໍລິການຂອງ Medicareໄດ້ໃນ ຂະນະທີ່ຢູ່ຕ່າງປະເທດ. ຖ້າທ່ານເຈັບປ່ວຍ ທ່ານອາດ ຈະຕ້ອງໄດ້ຈ່າຍຄ່າຮັກສາທັງໝົດດ້ວຍຕົວທ່ານເອງ. ຖ້າຫາກມີ Reciprocal Health Care Agreement ຢູ່ໃນ ປະເທດທີ່ທ່ານຈະໄປຢູ່ແລ້ວ ທ່ານອາດຈະບໍ່ຕ້ອງຈ່າຍໃນບາງຢ່າງ. ການຕົກລົງເຫຼົ່ານີ້ກວມເອົາຄ່າໃຊ້ຈ່າຍທາງແພດ ທີ່ຈຳເປັນສຳລັບຄົນອົດສະຕາລີທີ່ເດີນທາງໄປບາງປະເທດ ແລະ ບໍ່ໄດ້ເຮັດຂື້ນເພື່ອມາແທນການປະກັນໄພ ສຸຂະພາບສຳລັບການເດີນທາງໄປຕ່າງປະເທດແບບເອກກະຊົນ.

ຖ້າທ່ານໄປປະເທດທີ່ມີສົນທິສັນຍາຢູ່ແລ້ວ ຈົ່ງເອົາບັດ Medicare ປັດຈຸບັນຂອງທ່ານໄປນຳ. ແລ້ວໃນເວ ລາທີ່ທ່ານຕ້ອງການການຮັກສາທາງແພດ ມັນຈະຊ່ວຍທ່ານໄດ້ງ່າຍຂື້ນ.

ເພື່ອຂໍຂໍ້ມູນເພີ້ມຕື່ມກ່ຽວກັບ Reciprocal Health Care Agreements ຮວມເຖິງຂໍ້ມູນວ່າອົດສະຕາລີມີສົນທິສັນຍາ ນີ້ກັບປະເທດທີ່ທ່ານຈະໄປຫຼືບໍ່ ຈົ່ງເຂົ້າເບິ່ງທີ່ **humanservices.gov.au/rhca**

## ການນຳເອົາ ຫຼື ສົ່ງຢາຂອງທ່ານໄປຕ່າງປະເທດ

ມັນເປັນການຜິດກົດໝາຍໃນການນຳເອົາ ຫຼື ສົ່ງຢາ Pharmaceutical Benefits Scheme ທີ່ບໍ່ແມ່ນທັງ ເປັນຂອງສຳລັບຕົວທ່ານເອງ ຫຼື ເປັນຂອງສຳລັບຜູ້ທີ່ເດີນທາງໄປກັບທ່ານອອກນອກອົດສະຕາລີ.

ທ່ານຈະຫາໄດ້ຂໍ້ມູນອັບເດດກ່ຽວກັບການຈ່າຍເງິນ ບຳນານ ແລະ ບໍລິການຕ່າງໆໃນຂະນະທີ່ທ່ານຢູ່ຕ່າງປະເທດ ຮວມເຖິງ Medicare ໄດ້ທີ່ **humanservices.gov.au/australiansoverseas**

ຈົ່ງກວດເບິ່ງເວັບໄຊຕ໌ກ່ອນທີ່ທ່ານຈະອອກເດີນທາງຫຼືໂທ ຫາໝາຍເລກ 131 450(TIS National)ເພື່ອ ລົມກັບພວກເຮົາເປັນພາສາລາວກ່ຽວກັບ Medicare ແລະ ການນຳເອົາຢາໄປຕ່າງປະເທດ.

## ເພື່ອຂໍຂໍ້ມູນເພີ້ມຕື່ມ

- ໄປເບິ່ງທີ່ **humanservices.gov.au/yourlanguage** ຊຶ່ງທ່ານສາມາດອ່ານ, ຟັງ ຫຼື ເບິ່ງວີດີໂອທີ່ມີຂໍ້ມູນເປັນພາສາລາວ
- ໂທຫາໝາຍເລກ 131 202 ເພື່ອລົມ ກັບພວກເຮົາເປັນພາສາລາວກ່ຽວກັບການຈ່າຍ ເງິນບຳນານແລະບໍລິການຕ່າງໆຂອງ Centrelink
- ໂທຫາໝາຍເລກ 131 450(TIS National)ເພື່ອເວົ້າລົມກັບພວກເຮົາເປັນພາສາລາວ ກ່ຽວກັບ Medicare ແລະການຈ່າຍເງິນ Child Support ແລະບໍລິການຕ່າງໆ.

- ເຂົ້າໄປຫາສູນບໍລິການ

**ໝາຍເຫດ**: ຄ່າໂທລະສັບອອກຈາກເຮືອນຂອງທ່ານຫາ ໝາຍເລກທີ່ເລີ້ມຕົ້ນດ້ວຍ**13**ຈາກທຸກໆແຫ່ງໃນອົດສະຕາລີແມ່ນເທົ່າກັບຄ່າໂທໃນທ້ອງຖິ່ນ. ຄ່າໂທອາດຈະປ່ຽນ ໄປຂຶ້ນຢູ່ກັບຜູ້ໃຫ້ບໍລິການໂທລະສັບ ແລະ ຖ້າໂທຈາກມືຖື ກໍອາດຈະເສັຍຄ່າແພງຂຶ້ນ.

## ການປະຕິເສດ

ຂໍ້ມູນທີ່ຢູ່ເຈັ້ຍນີ້ແມ່ນຖືກຕ້ອງນັບຈາກ ເດືອນ ເມສາ 2016

Australian Government
Department of Human Services

# Are you travelling outside Australia?

## Payments while outside Australia

To get your payments or concession card while outside Australia, you must continue to meet the eligibility requirements for each payment or concession card.

Depending on your payments or concession card, there are different rules on how travelling outside Australia may affect you. When you leave Australia, your payments or concession cards may change or even stop based on these rules. For the most up-to-date information about payments and concession cards while you are overseas visit **humanservices.gov.au/paymentsoverseas**

Check the website before you travel or call us on **131 202** to speak to someone in your language about your specific circumstances.

## Tell us about changes to your circumstances

It is important that you advise us of any change to your circumstances that would normally affect your payments or concession card while you are overseas, as you would if you were in Australia. For example, you need to tell us if there are changes to your relationship status.

## How to tell us about your travel

The easiest way to tell us about your travel plans is to use your Centrelink online account through myGov. You can add, view, update and remove your overseas travel details online at any time.

Register for a Centrelink online account through myGov before you leave Australia so you can easily tell us about your travel plans and access your letters and other services online while you are away.

Australia’s immigration department will also advise us when you leave Australia.

If you don’t have a myGov account already, create a myGov account at **my.gov.au** and link Centrelink to your myGov account by selecting ‘Services’ and then the link icon next to Centrelink. You may need to answer some questions so we link the correct record to your myGov account.

If you choose to register your mobile number with myGov, make sure you can receive messages from this number while overseas.

## Accessing Medicare while outside Australia

You will not be able to access Medicare services while overseas. If you get sick, you may have to pay for all your medical treatment. If there is a Reciprocal Health Care Agreement in place with the country you’re going to, you might not have to pay for some things. These agreements cover the cost of essential medical treatment for Australian residents travelling in some countries, and are not designed to replace private travel health insurance for overseas travel.

If you are going to a country with an agreement, take your current Medicare card with you. Then, if you need medical treatment, it can make the process easier.

For more information about Reciprocal Health Care Agreements, including if Australia has one with the country you are travelling to, visit **humanservices.gov.au/rhca**

## Taking or sending your medicines overseas

It is illegal to take or send Pharmaceutical Benefits Scheme medicines out of Australia that are not either for your personal use or the use of someone travelling with you.

You will find the most up-to-date information about our payments and services while overseas, including Medicare, on **humanservices.gov.au/australiansoverseas**

Check the website before you travel or call **131 450** (TIS National) to speak to us in your language about Medicare and taking medicines overseas.

## For more information:

- go to **humanservices.gov.au/yourlanguage** where you can read about, listen to or watch videos with information in your language
- call **131 202** to speak to us in your language about Centrelink payments and services
- call **131 450** (TIS National) to speak with us in your language about Medicare and Child Support payments and services
- visit a service centre.

**Note:** call costs from your home phone to a 13 number from anywhere in Australia are the cost of a local call. Charges may vary depending on the telephone service provider, and mobiles may incur a higher charge.

## Disclaimer

Information in this factsheet is accurate as at April 2016.